## ມິຊຊາອາທິດທີ 4 ການົດທຳມະດາ
## ວັນທີ 29 ມັງກອນ 2023



**ພຣະວໍລະສານໂດຍນັກບຸນມັດເທວ 5, 1-12ກ**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງທອດພຣະເນດເຫັນຝູງຊົນ, ພຣະອົງກໍສະເດັດຂຶ້ນພູ, ຊົງປະທັບນັ່ງ, ແລະພວກສາວົກກໍເຂົ້າມາໃກ້ພຣະອົງ. ພຣະອົງຈຶ່ງຕັ້ງຕົ້ນເທດສອນພວກເຂົາດັ່ງນີ້: ບຸນລາບແກ່ຜູ້ມີໃຈຍາກຈົນ, ດ້ວຍວ່າອານາຈັກສະຫວັນເປັນຂອງຂອງເຂົາ. ບຸນລາບແກ່ຜູ້ມີໃຈອ່ອນຫວານ, ດ້ວຍວ່າພວກເຂົາຈະໄດ້ຮັບແຜ່ນດິນມາເປັນມໍລະດົກ. ບຸນລາບແກ່ຜູ້ທີ່ໄດ້ຮັບຄວາມທຸກຮ້ອນ, ດ້ວຍວ່າພວກເຂົາຈະໄດ້ຮັບຄວາມທຸເລົາບັນເທົາ. ບຸນລາບແກ່ຜູ້ທີ່ຫອດຫິວຄວາມຍຸຕິທຳ, ດ້ວຍວ່າພວກເຂົາຈະອີ່ມໜຳສຳລານ. ບຸນລາບແກ່ຜູ້ມີໃຈເອັນດູກະລຸນາ. ດ້ວຍວ່າພວກເຂົາຈະໄດ້ຮັບຄວາມເອັນດູກະລຸນາຕອບແທນ. ບຸນລາບແກ່ຜູ້ມີໃຈບໍລິສຸດ, ດ້ວຍວ່າພວກເຂົາຈະໄດ້ເຫັນພຣະເປັນເຈົ້າ. ບຸນລາບແກ່ຜູ້ສ້າງສັນຕິພາບ, ດ້ວຍວ່າພວກເຂົາຈະໄດ້ຊື່ວ່າເປັນບຸດພຣະເປັນເຈົ້າ. ບຸນລາບແກ່ຜູ້ຖືກບັງບຽດຍ້ອນຄວາມຍຸຕິທຳ, ດ້ວຍວ່າອານາຈັກສະຫວັນເປັນຂອງພວກເຂົາ. ບຸນລາບແກ່ພວກເຈົ້າທັງຫລາຍ, ເມື່ອພວກເຈົ້າຖືກດ່າປ້ອຍ, ຖືກບັງບຽດ ແລະຖືກໃສ່ຄວາມຫລາຍຢ່າງຍ້ອນເຮົາ. ພວກເຈົ້າຈົ່ງຊື່ນຊົມຍິນດີ, ດ້ວຍວ່າພວກເຈົ້າຈະໄດ້ຮັບບຳເໜັດອັນຍິ່ງໃຫຍ່ໃນສະຫວັນ; ແມ່ນດັ່ງນີ້ເອງທີ່ພວກປະພາສົກຜູ້ມາກ່ອນພວກເຈົ້າໄດ້ຖືກຂົ່ມເຫັງບັງບຽດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນນີ້ເປັນເໝືອນເຂັມທິດເຍືອງທາງຊ່ວຍພວກເຮົາໃຫ້ພົບກັບຫົນທາງທີ່ຈະນຳພວກເຮົາໄປສູ່ຄວາມສຸກທີ່ແທ້ຈິງໃນການດຳລົງຊີວິດຢູ່ໃນໂລກນີ້ແລະໃນໂລກໜ້າດ້ວຍ. ຄວາມສຸກທີ່ແທ້ຈິງນີ້ພວກເຮົາຮຽກວ່າ ບຸນລາບແປດປະການນັ້ນເອງ. ແລະຜູ້ທີ່ສາມາດເຂົ້າສູ່ແກ່ນສານຂອງຄວາມສຸກນີ້ໄດ້ຕ້ອງເປັນຜູ້ມີໃຈຍາກຈົນ, ໃຈສຸພາບ, ໃຈອ່ອນຫວານ, ໃຈເອັນດູກະລຸນາ, ໃຈບໍລິສຸດ. ໝາຍວ່າຕ້ອງເປັນຜູ້ທີ່ມີດວງໃຈທີ່ເຕັມດ້ວຍຄວາມຮັກ. ຮັກພຣະເຈົ້າແລະຮັກຄົນອື່ນ. ຄວາມຮັກນີ້ເປັນເຄື່ອງໝາຍແຫ່ງການປະທັບຢູ່ຂອງພຣະເຈົ້າ. ຄວາມຮັກເປັນເຄື່ອງໝາຍແຫ່ງການປະທັບຢູ່ຂອງອານາຈັກສະຫວັນ. ຄວາມຮັກທຳໃຫ້ພວກເຮົາຮູ້ຈັກລືມຕົວເອງແລະຄິດຫາຄົນອື່ນ. ສະຫລຸບແລ້ວຄວາມຮັກທຳໃຫ້ພວກເຮົາຄ້າຍຄືກັບພຣະເຢຊູເຈົ້າ, ຜູ້ເປັນອົງແຫ່ງຄວາມຮັກ. ບຸນລາບທີ່ພຣະເຢຊູເຈົ້າສອນພວກເຮົາວັນນີ້ເປັນຄຳເທດສອນທີ່ຊ່ວຍພວກເຮົາໃຫ້ຄ້າຍຄືກັບພຣະອົງແຕ່ລະມື້ແຕ່ລະວັນໃນການດຳລົງຊີວິດຂອງພວກເຮົາ. ແລະເມື່ອຈາກໂລກນີ້ໄປແລ້ວ, ພວກເຮົາກໍຈະໄດ້ໄປຢູ່ບ່ອນທີ່ມີແຕ່ຄວາມສຸກຄືອານາຈັກສະຫວັນຮ່ວມກັບພຣະອົງ.

ໃນພຣະທຳເກົ່າ, ທ່ານໂມແຊໄດ້ຮັບພຣະທຳບັນຍັດສິບປະການຈາກພຣະເຈົ້າຢູ່ເທິງພູເຂົາ, ອັນເປັນເສັ້ນທາງເພື່ອຊ່ວຍໃຫ້ປະຊາກອນພຣະເຈົ້າໃຫ້ເປັນຜູ້ສັກສິດ. ວັນນີ້, ໃນພຣະທຳໃໝ່, ພຣະເຢຊູເຈົ້າຜູ້ເປັນໂມແຊຄົນໃໝ່ໄດ້ປະທານບຸນລາບແປດປະການຢູ່ເທິງພູເຂົາໃຫ້ປະຊາກອນຂອງພຣະອົງ, ເພື່ອຊ່ວຍພວກເຂົາໃຫ້ມີຊີວິດຄ້າຍຄືກັບພຣະອົງໃນແຕ່ລະມື້ແຕ່ລະວັນ. ແລະເພື່ອພວກເຂົາຈະໄດ້ກາຍເປັນຜູ້ສັກສິດເໝືອນກັບພຣະບິດາເຈົ້າສະຫວັນເປັນຜູ້ສັກສິດ. ແຕ່ພວກເຮົາໄດ້ຟັງຄຳສອນຂອງພຣະອົງບໍ? ພວກເຮົາໄດ້ນຳມາປະຕິບັດໃນຊີວິດພວກເຮົາບໍ? ພວກເຮົາຢາກຄ້າຍຄືກັບພຣະອົງຜູ້ເປັນອາຈານຂອງພວກເຮົາບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮັບຟັງວາຈາຂອງພຣະອົງແລະນຳມາປະຕິບັດໃນຊີວິດຂອງລູກ. ເພື່ອລູກຈະໄດ້ຄ້າຍຄືກັບພຣະອົງຍິ່ງວັນຍິ່ງທະວີຂຶ້ນ. ແລະເພື່ອລູກຈະໄດ້ເປັນສິດທີ່ດີຂອງພຣະອົງຕະຫລອດໄປ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ